ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------

ກະຊວງຍຸຕິທຳ
ກົມໂຄສະນາອົບຮົມກົດໝາຍ

132

ເລກທີ 132 /ກຍ.ກອກ

ນະຄອນຫຼວງວຽງຈັນ, ວັນທີ 18 JUL 2016

# ບົດລາຍງານ

**ຮຽນ:** ທ່ານຮອງລັດຖະມົນຕີກະຊວງຍຸຕິທຳ

**ເລື່ອງ:** ການຝຶກອົບຮົມຜູ້ປະສານງານວຽກງານຈົດໝາຍເຫດທາງລັດຖະການໃນລະບົບເອເລັກໂຕຣນິກ 5 ແຂວງພາກໃຕ້.

## I. ສະພາບລວມ

ຊຸດຝຶກອົບຮົມຜູ້ປະສານງານວຽກງານຈົດໝາຍເຫດທາງລັດຖະການໃນລະບົບເອເລັກໂຕຣນິກ 5 ແຂວງ ພາກໃຕ້ ໄດ້ໄຂຂຶ້ນໃນເວລາ 8:30 ໂມງ ທີ່ ໂຮງແຮມຣຸ່ງທິບ (ເມືອງໄກສອນພົມວິຫານ) ແຂວງ ສະຫວັນນະເຂດ ພາຍໃຕ້ການເປັນປະທານຮ່ວມຂອງ ທ່ານ ຄຳພູນ ຕຸໄພທູນ ຄະນະປະຈຳພັກແຂວງ, ຮອງເຈົ້າແຂວງ ແຂວງສະຫວັນນະເຂດ ແລະ ທ່ານ ປອ. ເສີມສຸກ ສິມພະວົງ ຮອງເລຂາຄະນະພັກກະຊວງ, ຮອງລັດຖະມົນຕີກະຊວງຍຸຕິທຳ ໂດຍມີນັກສຳມະນາກອນມາຈາກຫ້ອງວ່າການປົກຄອງແຂວງ ແລະ ພະແນກຍຸຕິທຳແຂວງສະຫວັນນະເຂດ, ຈຳປາສັກ, ສາລະວັນ, ອັດຕະປື ແລະ ແຂວງເຊກອງ ໂດຍມີຜູ້ແທນເຂົ້າຮ່ວມທັງໝົດ 34 ທ່ານ, ຍິງ 10 ທ່ານ. ກົມໂຄສະນາອົບຮົມກົດໝາຍ ໂດຍສົມທົບກັບໂຄງການຮ່ວມມືລາວ - ສະຫະລັດອາເມລິກາ ເພື່ອການເຊື່ອມໂຍງສາກົນ ແລະ ອາຊຽນ LUNA II ເປັນເຈົ້າການໃນການຈັດຕັ້ງປະຕິບັດ.

## II. ສະພາບການຈັດຕັ້ງປະຕິບັດ

### ວັນທີ 29 ມິຖຸນາ 2016

### ພາກເຊົ້າ

- ທ່ານ ຄຳພູນ ຕຸໄພທູນ ກຳມະການປະຈຳພັກແຂວງ ຮອງເຈົ້າແຂວງ ແຂວງສະຫວັນນະເຂດ ໄດ້ເປັນກຽດກ່າວໃນພິທີເປີດຊຸດອົບຮົມວ່າ ວຽກງານຈົດໝາຍເຫດທາງລັດຖະການແມ່ນມີຄວາມໝາຍສຳຄັນ ໃນການຍົກສູງຄວາມຮັບຮູ້ ແລະ ຄວາມເຂົ້າໃຈຢ່າງເປັນເອກະພາບຂອງຜູ້ປະສານງານທີ່ໄດ້ຮັບການແຕ່ງຕັ້ງຈາກບັນດາ 5 ແຂວງພາກໃຕ້ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການໃນລະບົບເອເລັກໂຕຣນິກໃຫ້ມີປະສິດທິຜົນ ນອກນີ້ຍັງເຮັດໃຫ້ຜູ້ທີ່ໄດ້ຮັບການແຕ່ງຕັ້ງເປັນຜູ່ປະສານງານນັ້ນຮັບຮູ້ເຖິງພາລະບົດບາດ ແລະ ໜ້າທີ່ຂອງຕົນໃນການປະສານງານກັບໜ່ວຍງານຈົດໝາຍເຫດທາງລັດຖະການຂັ້ນສູນກາງ ໃນການເກັບໂຮມບັນດານິຕິກຳພິມລົງໃນຈົດໝາຍເຫດທາງລັດຖະການ, ພ້ອມກັນນັ້ນກໍເພື່ອເຮັດໃຫ້ການຈັດສົ່ງນິຕິກຳໃຫ້ຖືກຕ້ອງຕາມຂັ້ນຕອນ, ສອດຄ່ອງກັບເປົ້າໝາຍ ແລະ ມີ

ຜົນສັກສິດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການສ້າງນິຕິກຳ. ທ່ານຍັງໄດ້ເນັ້ນຕື່ມອີກວ່າເວັບໄຊຈົດໝາຍເຫດທາງລັດຖະການເປັນເວັບໄຊທີ່ມີຄວາມສຳຄັນ ເນື່ອງຈາກວ່າບັນດານິຕິກຳທີ່ມີຜົນບັງຄັບທົ່ວໄປ ທີ່ຖືກຮັບຮອງ ແລະ ປະກາດໃຊ້ແລ້ວນັ້ນຕ້ອງໄດ້ເອົາມາລົງໃນເວັບໄຊດັ່ງກ່າວ ເພື່ອໃຫ້ບັນດານິຕິກຳເຫຼົ່ານັ້ນ ມີຜົນສັກສິດຕາມກົດໝາຍ. ພ້ອມດຽວກັນນັ້ນຍັງເປັນການສ້າງເງື່ອນໄຂອັນໜຶ່ງທີ່ ສປປ ລາວ ໄດ້ເຂົ້າເປັນສະມາຊິກອົງການການຄ້າໂລກ ( WTO ) ແລະ ເຂົ້າເປັນສະມາຊິກປະຊາຄົມເສດຖະກິດອາຊຽນ ( AEC ).

ທ່ານຍັງໄດ້ຮຽກຮ້ອງມາຍັງຜູ້ບັນຍາຍເອກະສານ ໃຫ້ອະທິບາຍຢ່າງລະອຽດ, ຈະແຈ້ງ ແລະ ມີຄວາມເຂົ້າໃຈງ່າຍ, ເພື່ອຈະເຮັດໃຫ້ຜູ້ປະສານງານທີ່ມາຈາກບັນດາແຂວງນັ້ນມີຄວາມເຂົ້າໃຈກ່ຽວກັບວຽກງານດັ່ງກ່າວ. ຖ້າເຫັນວ່າບັນຫາໃດບໍ່ເຂົ້າໃຈ ຂໍໃຫ້ສະເໜີຖາມ ແລະ ມີການແລກປ່ຽນຄວາມເຫັນນຳກັນ ເພື່ອເຮັດໃຫ້ຊຸດຝຶກອົບຮົມໃນຄັ້ງນີ້ມີບັນຍາກາດທີ່ດີ ແລະ ໄດ້ຮັບໝາກຜົນສູງ. ຫຼັງຈາກນັ້ນທ່ານກໍໄດ້ກ່າວເປີດຊຸດຝຶກອົບຮົມຢ່າງເປັນທາງການ ຊຶ່ງຊຸດຝຶກອົບຮົມດັ່ງກ່າວໄດ້ດຳເນີນເປັນເວລາ ສອງ ວັນ.

- ທ່ານ ແດນຽວ ຟິດສ໌ແພັດທຼິກ ຜູ້ອຳນວຍການໂຄງການ Luna II ໄດ້ກ່າວວ່າ ຊຸດຝຶກອົບຮົມໃນຄັ້ງນີ້ແມ່ນມີຄວາມສຳຄັນຫຼາຍ ເພາະຈະເຮັດໃຫ້ບັນດາທ່ານ ມີຄວາມຮັບຮູ້ ແລະ ເຂົ້າໃຈ ເລິກເຊິ່ງ ກ່ຽວກັບວຽກງານຈົດໝາຍເຫດທາງລັດຖະການ ຜ່ານການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໂຄງການລູນາລາວ ເຫັນໄດ້ເຖິງຜົນສຳເລັດຫຼາຍດ້ານເປັນຕົ້ນແມ່ນ ໄດ້ສ້າງເວັບໄຊຈົດໝາຍເຫດທາງລັດຖະການ ທັນຕາມກຳນົດເວລາ ແລະ ໄດ້ນຳເອົາກົດໝາຍ ແລະ ບັນດານິຕິກຳ ພິມລົງໃນເວັບໄຊເປັນຈຳນວນຫຼາຍແລ້ວ. ດັ່ງນັ້ນ, ໂຄງການ Luna II ຈຶ່ງໄດ້ສືບຕໍ່ໃຫ້ການສະໜັບສະໜູນ ກະຊວງຍຸຕິທຳ ເປັນຕົ້ນມາ ແລະ ສປປ ລາວ ມີຄວາມຈຳເປັນໃນການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການໃນລະບົບເອເລັກໂຕຣນິກ ເພາະເວັບໄຊຈົດໝາຍເຫດທາງລັດຖະການແມ່ນມີຄວາມສຳຄັນ ເນື່ອງຈາກວ່າບັນດານິຕິກຳທີ່ມີຜົນບັງຄັບທົ່ວໄປ ທີ່ຖືກຮັບຮອງ ແລະ ປະກາດໃຊ້ແລ້ວນັ້ນ ແມ່ນຕ້ອງໄດ້ເອົາມາລົງເວັບໄຊດັ່ງກ່າວ ເພື່ອໃຫ້ບັນດານິຕິກຳເຫຼົ່ານັ້ນ ມີຜົນສັກສິດຕາມກົດໝາຍ ນັບແຕ່ນິຕິກຳຂັ້ນສູນກາງລົງໄປຮອດຂັ້ນທ້ອງຖິ່ນ ພ້ອມກັນນັ້ນຍັງເປັນການສ້າງເງື່ອນໄຂອັນໜຶ່ງ ທີ່ເຮັດໃຫ້ ສປປ ລາວ ໄດ້ມີການເຊື່ອມໂຍງກັບສາກົນ ແລະ ພາກພື້ນ ການເຂົ້າເປັນສະມາຊິກອົງການການຄ້າໂລກ (WTO) ແລະ ເຂົ້າເປັນສະມາຊິກປະຊາຄົມເສດຖະກິດອາຊຽນ (AEC) ເພື່ອເຮັດໃຫ້ນັກລົງທຶນຕ່າງປະເທດ ສາມາດເຂົ້າເບິ່ງນິຕິກຳຂອງ ສປປ ລາວ ເພື່ອຈະເຮັດໃຫ້ເຂົ້າໃຈ ມີຄວາມໝັ້ນໃຈ ທີ່ຈະເຂົ້າມາລົງທຶນໃນປະເທດເຮົາ ແລະ ເຮັດໃຫ້ປະເທດເຮົາມີຄວາມພັດທະນາຂຶ້ນເລື້ອຍໆ.

ທ່ານຍັງໄດ້ເນັ້ນຕື່ມອີກວ່າ ຂໍໃຫ້ບັນດາທ່ານນັກສຳມະນາກອນ ທີ່ເຂົ້າຮ່ວມຝຶກອົບຮົມໃນຄັ້ງນີ້ ນຳເອົາເນື້ອໃນຈິດໃຈຂອງການຝຶກອົບຮົມນຳໄປໝູນໃຊ້ເຂົ້າໃນວຽກງານຂອງຕົນໃຫ້ມີໃບໜ້າໃໝ່ ແລະ ນຳເອົາບັນດານິຕິກຳທີ່ມີຜົນບັງຄັບທົ່ວໄປ ທີ່ມີຢູ່ໃນຄວາມຮັບຜິດຊອບຂອງທ່ານສົ່ງມາຫາໜ່ວຍງານຈົດໝາຍເຫດທາງລັດຖະການ.

- ທ່ານ ນ. ຄອນສະຫວັນ ສາວະລີ ຮອງຫົວໜ້າກົມໂຄສະນາອົບຮົມກົດໝາຍ ໄດ້ສະເໜີກ່ຽວກັບການທົບທວນການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການໃນຂອບເຂດທົ່ວປະເທດ ນັບແຕ່ຂັ້ນສູນກາງ ລົງຮອດຂັ້ນທ້ອງຖິ່ນ ຊຶ່ງໄດ້ເວົ້າເຖິງການເຄື່ອນໄຫວວຽກງານຂັ້ນເລີ່ມຕົ້ນການຈັດກອງປະຊຸມໂດຍຫຍໍ້ ແລະ ການເປີດບໍລິການເວັບໄຊຢ່າງເປັນທາງການ, ຈາກນັ້ນກໍໄດ້ເວົ້າເຖິງການຈັດຊຸດອົບຮົມໃຫ້ພາກສ່ວນຕ່າງໆອ້ອມຂ້າງສູນກາງ ເຫັນວ່າໄດ້ບົດຮຽນຫຼາຍຢ່າງ ແລະ ຜົນສຳເລັດໃນຫຼາຍດ້ານ. ຫຼັງຈາກນັ້ນ ໄດ້ຍົກໃຫ້ເຫັນການຈັດຕັ້ງປະຕິບັດວຽກງານ ຢູ່ຂັ້ນແຂວງ ຊຶ່ງເຫັນວ່າໄດ້ຮັບການຮ່ວມມື ແລະ ມີຜົນສຳເລັດດີ ເປັນຕົ້ນ ໄດ້ລົງທາບທາມຄຳຄິດເຫັນກ່ຽວກັບວຽກງານຈົດໝາຍເຫດໃນຂອບເຂດທົ່ວປະເທດ (ຍົກເວັ້ນແຂວງໄຊສົມບູນ) ແລະ ໄດ້ເປີດກອງປະຊຸມຮ່ວມກັບເປົ້າໝາຍທີ່ໄດ້ລົງທາບທາມນັ້ນ ໂດຍຈັດເປັນພາກຄື: ພາກເໜືອ, ພາກກາງ ແລະ ພາກໃຕ້. ນອກຈາກນັ້ນ ທ່ານກໍໄດ້ຍົກໃຫ້ເຫັນກ່ຽວກັບການນຳເອົານິຕິກຳຂອງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ພິມລົງໃນເວັບໄຊນັ້ນ ແຕ່ປີ 2013 ເຖິງປັດຈຸບັນ ຊຶ່ງມີນິຕິກຳປະມານ